# ລັດຖະບານ, ຄູ່ຮ່ວມພັດທະນາ ແລະ ພາກທຸລະກິດ ຮ່ວມກັນປຶກສາຫາລື ແຜນຍຸດທະສາດ 5 ປີ ໃນ ການພັດທະນາຂະແໜງອຸດສາຫະກໍາ ແລະ ການຄ້າ

**ນະຄອນຫຼວງວຽງຈັນ, ສປປ ລາວ – ວັນທີ 24 ກໍລະກົດ 2025** – ກະຊວງອຸດສາຫະກໍາ ແລະ ການຄ້າ (ອຄ), ຮ່ວມກັບຄູ່ຮ່ວມພັດທະນາ, ໄດ້ຈັດກອງປະຊຸມປຶກສາຫາລື ໃນມື້ນີ້ ເພື່ອເລັ່ງໃສ່ການພັດທະນາຂະແໜງການຄ້າ ແລະ ພາກທຸລະກິດ ຢູ່ ສປປ ລາວ. ຕາງໜ້າຈາກຂະແໜງການພາກລັດທີ່ກ່ຽວຂ້ອງ, ພາກທຸລະກິດ ແລະ ຄູ່ຮ່ວມພັດທະນາ ສາກົນໄດ້ຮ່ວມກັນປຶກສາຫາລືຍຸດທະສາດ ທີ່ຈະຊຸກຍູ້ການເຕີບໂຕແບບມີສ່ວນຮ່ວມ ແລະ ສະໜັບສະໜູນການຂະຍວນການຫຼຸດພົ້ນ ອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC).

ທ່ານ ມະໄລທອງ ກົມມະສິດ, ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ, ປະທານກອງປະຊຸມ ແລະ ທ່ານ Mark Gallagher, ເອກອັກຄະລັດຖະທູດສະຫະພາບເອີຣົບ, ປະທານຮ່ວມ ໄດ້ກ່າວເປີດກອງປະຊຸມ ໂດຍ ໄດ້ເນັ້ນໜັກເຖິງບົດບາດສໍາຄັນຂອງພາກທຸລະກິດ ໃນການຂັບເຄື່ອນຂະບວນການນະວັດຕະກໍາ, ການສ້າງວຽກເຮັດງານທໍາ ແລະ ຄວາມຢືດຢຸ່ນທາງດ້ານເສດຖະກິດໃນໄລຍະຍາວ.

ທ່ານ ລັດຖະມົນຕີ ໄດ້ກ່າວວ່າ "ພາກທຸລະກິດແມ່ນກໍາລັງຫຼັກຂອງເສດຖະກິດຂອງພວກເຮົາ, ການເຕີບໂຕຂອງພາກທຸລະກິດ ແມ່ນບູລິມະສິດສໍາຄັນລະດັບຊາດ. ໃນຂະນະທີ່ພວກເຮົາກໍາລັງກ້າວໄປສູ່ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ແລະ ດໍາເນີນຕາມເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10 ຂອງພວກເຮົາ, ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍ ແລະ ເປັນມິດກັບນັກລົງທຶນແມ່ນມີຄວາມສໍາຄັນເປັນຢ່າງຍິ່ງ."

ໃນກອງປະຊຸມ, ທ່ານ Robert Kirk, ຜູ້ຊ່ຽວຊານດ້ານການຄ້າ, ໄດ້ນໍາສະເໜີຮ່າງແຜນພັດທະນາ 5 ປີ (2026–2030) ເຊິ່ງຮ່າງແຜນພັດທະນາດັ່ງກ່າວ ໄດ້ກໍານົດເປົ້າໝາຍຍຸດທະສາດ ສໍາລັບຂະແໜງການຄ້າ, ອຸດສາຫະກໍາປຸງແຕ່ງ, ຂະແໜງພະລັງງານ ແລະ ບໍ່ແຮ່ ຜ່ານການເສີມສ້າງຄວາມເຂັ້ມແຂງດ້ານການແຂ່ງຂັນ ແລະ ເພີ່ມທະວີການເຊື່ອມໂຍງລະດັບພາກພື້ນ.

ໃນພາກສົນທະນາ ຜູ້ເຂົ້າຮ່ວມໄດ້ປະກອບຄໍາຄິດເຫັນຕໍ່ກອງປະຊຸມ ທີ່ສ້າງສັນ ແລະ ເປັນປະໂຫຍດ, ເພື່ອຮັບປະກັນໃຫ້ຮ່າງແຜນການດັ່ງກ່າວສາມາດສະທ້ອນເຖິງບູລິມະສິດຮ່ວມກັນຂອງຫຼາຍພາກສ່ວນ ແລະ ສາມາດປະຕິບັດໄດ້ໃນຕົວຈິງ.

ທ່ານ Mark Gallagher, ເອກອັກຄະລັດຖະທູດສະຫະພາບເອີຣົບ ໄດ້ເນັ້ນໜັກເຖິງຄວາມສໍາຄັນຂອງການຈັດຕັ້ງປະຕິບັດ ແລະ ກ່າວວ່າ: "ຄວາມສໍາເລັດຈະບໍ່ໄດ້ມາຈາກແຜນການທີ່ດີພຽງຢ່າງດຽວ, ແຕ່ຈະມາຈາກການປະຕິບັດງານ ທີ່ມີການປະສານງານ ແລະ ມີປະສິດທິພາບ. ຫວັງວ່າ ດ້ວຍຄວາມພະຍາຍາມ ແລະ ການຮ່ວມມື ທີ່ໃກ້ຊິດຂອງທຸກຝ່າຍ, ແຜນພັດທະນາ 5 ປີ ນີ້ສາມາດຊ່ວຍປົດລ້ອກທ່າແຮງຂອງ ສປປ ລາວ ແລະ ຮັບປະກັນການຫັນປ່ຽນຈາກສະຖານະພາບປະເທດດ້ອຍພັດທະນາຢ່າງຄ່ອງຕົວ ແລະ ຍືນຍົງ."

ທີມງານການຄ້າຂອງທະນາຄານພັດທະນາອາຊີ (ADB) ຍັງໄດ້ສະເໜີ ກ່ຽວກັບຜົນການສໍາຫຼວດເບື້ອງຕົ້ນຈາກການປະເມີນມາດຕະການທີ່ບໍ່ແມ່ນພາສີ (NTMs), ໂດຍນໍາໃຊ້ຂໍ້ມູນຈາກຖານຂໍ້ມູນການຄ້າ. ການວິເຄາະໄດ້ເນັ້ນໜັກ

ເຖິງຄວາມຈຳເປັນໃນການປັບປຸງລະບຽບການກ່ຽວຂ້ອງ ເພື່ອຫຼຸດຜ່ອນອຸປະສັກທາງການຄ້າ ແລະ ອຳນວຍຄວາມສະດວກໃຫ້ແກ່ການຄ້າຂ້າມຊາຍແດນທີ່ມີປະສິດທິພາບຫຼາຍຂຶ້ນ.

ໃນບົດກ່າວປິດ, ທ່ານນາງ Heather Variava, ເອກອັກຄະລັດຖະທູດສະຫະລັດອາເມລິກາ ປະຈຳ ສປປ ລາວ, ໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການຮ່ວມມື ແລະ ຄວາມຮັບຜິດຊອບຮ່ວມກັນ ແລະ ກ່າວວ່າ: "ສະຫະລັດອາເມລິກາ ຊຸກຍູ້ການລົງທຶນຂອງພາກເອກະຊົນ ໃນ ສປປ ລາວ ແລະ ສືບຕໍ່ຄວາມມຸ້ງໝັ້ນ ໃນການຊ່ວຍປົດລ້ອກທ່າແຮງດ້ານເສດຖະກິດ ຂອງທັງສະຫະລັດອາເມລິກາ ແລະ ສປປ ລາວ ເພື່ອສົ່ງເສີມການຄ້າ ແລະ ການລົງທຶນທີ່ຍຸດຕິທຳ"

ທ່ານ ມະໄລທອງ ກົມມະສິດ, ໄດ້ກ່າວສະຫຼຸບກອງປະຊຸມໂດຍຮຽກຮ້ອງໃຫ້ເອົາໃຈໃສ່ຕໍ່ການຈັດຕັ້ງປະຕິບັດແຜນທີ່ໄດ້ຮັບຮອງ ແລະ ເນັ້ນວ່າ: "ການສົນທະນາທີ່ສ້າງສັນ ແລະ ການມີສ່ວນຮ່ວມຢ່າງຫ້າວຫັນໃນມື້ນີ້ ສະທ້ອນໃຫ້ເຫັນເຖິງຄຳໝັ້ນສັນຍາຮ່ວມກັນໃນການສ້າງອະນາຄົດ ທີ່ຈະເລີນຮຸ່ງເຮືອງໃຫ້ແກ່ ສປປ ລາວ. ຮ່າງແຜນພັດທະນາ 5 ປີ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ແມ່ນຫົວໃຈສຳຄັນຂອງ ວາລະພັດທະນາຂອງພວກເຮົາ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10. ພວກເຮົາຮຽກຮ້ອງໃຫ້ທຸກພາກສ່ວນສືບຕໍ່ຮ່ວມມືຢ່າງໃກ້ຊິດກັບ ກະຊວງ ອຸດສາຫະກຳ ແລະ ການຄ້າ ໃນຂະບວນການຮ່າງແຜນພັດທະນາສະບັບນີ້."

ກະຊວງອຸດສາຫະກຳ ແລະ ການຄ້າ ຂໍສະແດງຄວາມຂອບໃຈຢ່າງສູງຕໍ່ຜູ້ເຂົ້າຮ່ວມທຸກທ່ານ ແລະ ການຮ່ວມມືຢ່າງຕໍ່ເນື່ອງ ແລະ ຄວາມພະຍາຍາມ ທີ່ມີຕໍ່ການຫັນປ່ຽນໂຄງສ້າງເສດຖະກິດຂອງ ສປປ ລາວ.